ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1790/ສສກ.ກກ

ນະຄອນຫຼວງວຽງຈັນ,ວັນທີ 25 DEC 2013

# ຄຳສັ່ງ

## ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ ໃນຂະແໜງການສຶກສາ ແລະ ກິລາ

ເຖິງ: - ທ່ານ ຫົວໜ້າຫ້ອງການກະຊວງ, ຫົວໜ້າກົມ, ອົງການເທົ່າກົມ, ຜູ້ອຳນວຍການສູນ;
- ທ່ານ ອະທິການບໍດີມະຫາວິທະຍາໄລແຫ່ງຕ່າງໆ;
- ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ຫົວໜ້າຫ້ອງການ ສຶກສາທິການ ແລະ ກິລາ ເມືອງ/ເທດສະບານ;
- ຜູ້ອຳນວຍການວິທະຍາໄລ, ໂຮງຮຽນ ທັງພາກລັດ ແລະ ພາກເອກະຊົນໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ແຫ່ງ ສປປລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 3 ກໍລະກົດ 2007.
- ອີງຕາມ ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ໄລຍະ II (2011-2015)
- ອີງຕາມ ສະພາບປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຕົວຈິງໃນຂະແໜງສຶກສາ ແລະ ກິລາ.

ໃນຊຸມປີທີ່ຜ່ານມາ,ຂະແໜງການສຶກສາ ແລະ ກິລາ ກໍ່ໄດ້ຕັ້ງໜ້າສະກັດກັ້ນ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ ໃຫ້ຫຼຸດລົງເທື່ອລະກ້າວ, ແຕ່ສະພາບປະກົດການຫຍໍ້ທໍ້ ກໍ່ຍັງເກີດຂຶ້ນຫຼາຍກໍລະນີ ໂດຍສະເພາະການປອມແປງປະກາສະນີຍະບັດ, ການປອມແປງເອກະສານຢັ້ງຢືນການຮຽນ, ສະພາບຫຍໍ້ທໍ້ໃນຖັນແຖວຜູ້ບໍລິຫານ, ພະນັກງານ, ຄູ-ອາຈານ,ນັກຮຽນ ນັກສຶກສາ ແລະ ໃນຖັນແຖວນັກກິລາ.

ເພື່ອສະກັດກັ້ນ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ດັ່ງກ່າວໃຫ້ປະກົດຜົນເປັນຈິງ,ເຂັ້ມງວດ ແລະ ທັນການ.

### ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

### ຈຶ່ງອອກຄຳສັ່ງ:

1. ການສະກັດກັ້ນການປອມແປງປະກາສະນີຍະບັດ ແລະ ເອກະສານຢັ້ງຢືນການຮຽນ

1.1 ກ່ອນຈະຮັບລັດຖະກອນໃໝ່ ການຈັດຕັ້ງທຸກຂັ້ນໃນຂະແໜງການສຶກສາ ແລະ ກິລາ, ຕ້ອງເຂັ້ມງວດໃນການກວດ ກາປະກາສະນີຍະບັດ, ໂດຍສົມທົບກັບພາກສ່ວນທີ່ຄຸ້ມຄອງ ແລະ ອອກປະກາສະນີຍະບັດ;

1.2 ກ່ອນຈະຮັບນັກຮຽນ-ນັກສຶກສາ ແລະ ພະນັກງານເຂົ້າຮຽນ ສະຖາບັນການສຶກສາທຸກຂັ້ນທຸກສາຍ ທັງພາກລັດ, ພາກເອກະຊົນ ຕ້ອງເຂັ້ມງວດໃນການກວດກາປະກາສະນີຍະບັດ ໂດຍສົມທົບກັບພາກສ່ວນທີ່ຄຸ້ມຄອງ ແລະ ອອກປະກາສະນີຍະບັດ;

1.3 ໃຫ້ກົມວິຊາການ, ສະຖາບັນການສຶກສາທັງພາກລັດ ແລະ ເອກະຊົນ ທີ່ຄຸ້ມຄອງການອອກປະກາສະນີຍະບັດ, ສ້າງຖານຂໍ້ມູນ, ເວັບໄຊ ເພື່ອເກັບກຳຂໍ້ມູນນັກຮຽນ-ນັກສຶກສາ ທີ່ເຂົ້າຮຽນ ແລະ ຮຽນຈົບຊັ້ນ ພ້ອມທັງມີປື້ມຕິດຕາມການຮຽນຂອງນັກຮຽນ-ນັກສຶກສາ ຢ່າງຄົບຖ້ວນ.

2. ການສະກັດກັ້ນ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ໃນຖັນແຖວຜູ້ບໍລິຫານ, ພະນັກງານ ແລະ ຄູ-ອາຈານ

2.1 ຜູ້ບໍລິຫານທຸກຂັ້ນຕ້ອງຄົ້ນຄ້ວາເຊື່ອມຊຶມມະຕິ, ຄຳສັ່ງ, ລະບຽບຂອງພັກ, ກົດໝາຍຂອງລັດໃຫ້ເລິກເຊິ່ງ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານທີ່ຕົນຮັບຜິດຊອບໃຫ້ປະກົດຜົນເປັນຈິງ;

2.2 ຕ້ອງສ້າງ ແລະ ປັບປຸງນິຕິກຳກ່ຽວກັບການບໍລິຫານຄຸ້ມຄອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ຮັດກຸມ ແລະ ເຂັ້ມງວດ;

2.3 ຕ້ອງປັບປຸງແບບແຜນວິທີເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ເຮັດວຽກມີແຜນການ, ມີຈຸດສຸມ ຕິດແທດຕົວຈິງ, ມີການຕິດຕາມກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ລາຍງານໃຫ້ຂັ້ນເທິງໃຫ້ເປັນປົກກະຕິ;

2.4 ຕ້ອງມີລະບຽບວິໄນ, ມີຄວາມເດັດຂາດເຂັ້ມງວດ, ມີຄວາມເປັນແບບຢ່າງນຳໜ້າ;

2.5 ຕ້ອງຈັດຕັ້ງຂະບວນການຄົ້ນຄ້ວາວິໄຈທາງດ້ານວິທະຍາສາດ, ແຂ່ງຂັນສອນດີ, ສອນເກັ່ງ, ສະກັດກັ້ນ ແລະ ຕ້ານສະພາບປະກົດການຫຍໍ້ ແລະ ສ້າງສິ່ງແວດລ້ອມທີ່ດີໃນຂົງເຂດຂອງຕົນ.

3. ການສະກັດກັ້ນ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ໃນຖັນແຖວນັກຮຽນ-ນັກສຶກສາ

3.1 ຈັດຕັ້ງເຜີຍແຜ່ມະຕິ, ຄຳສັ່ງ, ລະບຽບ, ກົດໝາຍ ໃຫ້ແກ່ນັກຮຽນ-ນັກສຶກສາ ໃຫ້ເລິກເຊິ່ງທົ່ວເຖິງ ແລະ ເປັນປົກກະຕິ;

3.2 ຕ້ອງຈັດຕັ້ງການແຂ່ງຂັນສອນດີ-ຮຽນເກັ່ງ, ສະກັດກັ້ນ ແລະ ຕ້ານສະພາບປະກົດການຫຍໍ້ທໍ້ ແລະ ສ້າງສິ່ງແວດລ້ອມໃນ ແລະ ນອກຫ້ອງຮຽນ;

3.3 ຕ້ອງຈັດກິດຈະກຳເສີມຫຼັກສູດ ທັງພາກລັດ ແລະ ພາກເອກະຊົນ;

3.4 ຕ້ອງສ້າງ ແລະ ປັບປຸງລະບຽບການຄຸ້ມຄອງ ນັກຮຽນ-ນັກສຶກສາ ທັງໃນ ແລະ ນອກໂຮງຮຽນ.

3.5 ຕ້ອງສ້າງກົນໄກການຕິດຕາມກວດການັກຮຽນ-ນັກສຶກສາ ທັງໃນ ແລະ ນອກໂຮງຮຽນ;

4. ການສະກັດກັ້ນ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ໃນຖັນແຖວ ນັກກິລາ

4.1 ຕ້ອງສ້າງ ແລະ ປັບປຸງນິຕິກຳກ່ຽວກັບການຄຸ້ມຄອງການບໍລິຫານການກິລາ ໃຫ້ຮັດກຸມຂຶ້ນຕື່ມ;

4.2 ການຄັດເລືອກນັກກິລາ, ຄະນະຮັບຜິດຊອບແຕ່ລະຂັ້ນຂອງກະຊວງຕ້ອງສົມທົບກັບສະຫະພັນກິລາແຕ່ລະປະເພດໃຫ້ປະຕິບັດຕາມມາດຕະຖານ ແລະ ເງື່ອນໄຂຢ່າງເຂັ້ມງວດ.

5. ວິທີການຈັດຕັ້ງປະຕິບັດ

5.1 ໃຫ້ຜູ້ບໍລິຫານທຸກຂັ້ນຕ້ອງເພີ່ມທະວີການສຶກສາອົບຮົມການເມືອງແນວຄິດ ໃຫ້ເລິກເຊິ່ງ ກວ້າງຂວາງ ແລະ ເຮັດເປັນປົກກະຕິ;

5.2 ໃຫ້ທຸກການຈັດຕັ້ງ ນັບແຕ່ຂັ້ນກະຊວງລົງຮອດຮາກຖານທ້ອງຖິ່ນ ແຕ່ງຕັ້ງຄະນະຮັບຜິດຊອບ ສະກັດກັ້ນ ແລະ ແກ້ໄຂສະພາບປະກົດການຫຍໍ້ທໍ້ໃນຂັ້ນຂອງຕົນ;

5.3 ໃຫ້ປະຕິບັດການກວດກາ ຕາມພາລະບົດບາດຂອງຕົນເປັນກົກ, ບັນຫາເກີດຂຶ້ນບ່ອນໃດ ມອບໃຫ້ຄະນະພັກ, ອົງການປົກຄອງບ່ອນນັ້ນ ເປັນຜູ້ນຳພາແກ້ໄຂໃຫ້ຂາດຕົວ ແລະ ທັນການ; ກໍລະນີບໍ່ສາມາດແກ້ໄຂໄດ້ ໃຫ້ລາຍງານຂັ້ນເທິງເພື່ອຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດ.

5.4 ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງປະຕິບັດ ຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

5.5 ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,

ດຣ.ພັນຄຳ ວິພາວັນ

\# ບ່ອນສົ່ງ:

| | | |
|---|---|---|
| - ຫ້ອງການ, ກົມ, ອົງການເທົ່າກົມ, ສູນ | ພາກສ່ວນ | 1 ສະບັບ. |
| - ມະຫາວິທະຍາໄລ, ວິທະຍາໄລ, ໂຮງຮຽນ | ພາກສ່ວນ | 1 ສະບັບ. |
| - ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫລວງ | ພາກສ່ວນ | 1 ສະບັບ. |
| - ຫ້ອງການສຶກສາທິການ ແລະ ກິລາເມືອງ | ພາກສ່ວນ | 1 ສະບັບ. |
| - ຄະນະສະກັດກັ້ນຫຍໍ້ທໍ້ກະຊວງ | ທ່ານລະ | 1 ສະບັບ |
| - ເກັບມ້ຽນ | | 2 ສະບັບ. |